ແຜນທີ່ຂ້າງລຸ່ມນີ້ສະແດງໃຫ້ເຫັນການແຈກຢາຍຂອງແຜນງານກະສິກຳ ແລະ ການພັດທະນາຊົນນະບົດແຍກຕາມແຕ່ລະເຂດພູມສັນຖານ ທີ່ໄດ້ຮັບການສະໜອງທຶນຈາກຄູ່ຮ່ວມພັດທະນາເອີຣົບຜ່ານແຜນງານຮ່ວມ. ສຳລັບໂຄງການທີ່ມີການຈັດຕັ້ງປະຕິບັດ ໃນທົ່ວປະເທດແມ່ນຖືກລາຍງານຢູ່ນະຄອນຫຼວງວຽງຈັນ.




35 ໂຄງການ

€134.4 ລ້ານ ເອີໂຣ ທຶນຊ່ວຍເຫຼືອ

## ຈຸດສຸມ

ໂຄງການເຂດເນີນສູງພາກເໜືອ-ການສົ່ງເສີມການຟື້ນຟູສະພາບການປ່ຽນແປງດິນ ຟ້າອາກາດ (NU-PCR)

ໃນປະເທດລາວ ແລະ ທົ່ວໂລກ, ການປັບຕົວຂອງລະບົບກະສິກຳໃຫ້ເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດໄດ້ກາຍເປັນສິ່ງທີ່ຈຳເປັນທີ່ສຸດ. ຄູ່ຮ່ວມໂຄງການທີ່ປະກອບມີ ອົງການ CARE, ອົງການຮ່ວມມືກັບປະເທດລາວ (CCL) ແລະ ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA) ໃຫ້ການສະໜັບສະໜູນແກ່ຊາວກະສິກອນຂະໜາດນ້ອຍເຂດເນີນສູງໂດຍການສະໜອງເຄື່ອງມື ແລະ ຄວາມຮູ້ທີ່ຈຳເປັນເຂົ້າໃນການຕັດສິນໃຈ ໃນການພັດທະນາ ແລະ ສ້າງກິດຈະກຳການຜະລິດ ແບບຍືນຍົງ ແລະ ເພີ່ມມູນຄ່າເຊັ່ນ: ການຜະລິດຊາ.

"ການຜະລິດຊາໄດ້ປ່ຽນແປງທຸກໆຢ່າງໃນບ້ານຂອງພວກເຮົາ. ເມື່ອກ່ອນ, ມີພຽງແຕ່ການລ້ຽງໝູເທົ່ານັ້ນທີ່ສາມາດສ້າງລາຍໄດ້ຈຳນວນໜຶ່ງເພື່ອເອົາໄວ້ໃຊ້ໃນຍາມທີ່ພວກເຮົາຈຳເປັນຕ້ອງໄດ້ຊື້ເຂົ້າ ຫຼື ຜະລິດຕະພັນອາຫານຫຼັກ. ດຽວນີ້, ທຸກຄອບຄົວໃນບ້ານແມ່ນມີລາຍໄດ້ຢ່າງສະບາຍຍ້ອນການຜະລິດຊາ - ທ້າວ ບຸນທອງ, ເມືອງຍອດອູ, ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ NU-PCR



ຮູບພາບຂ້າງເທິງ: ໃບຊາທີ່ເກັບດ້ວຍມື ໂຄງການ.
ໜ້າປົກຕາມທິດເຂັມໂມງຈາກຊ້າຍມືເທິງສຸດ: ການເຂົ້າເຖິງຖະໜົນຫົນທາງຢູ່ເຂດຊົນນະບົດທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ Lao30 LuxDev. ການເກັບກ່ຽວພືດຜັກໃນລະດູແລ້ງ ໂຄງການ NUDP. ສູນວິໄຈສາທາລະນະສຸກ ທີ່ເປັນສ່ວນໜຶ່ງຂອງລະບົບຄວາມປອດໄພຂອງຕ່ອງໂສ້ອາຫານທີ່ໄດ້ຮັບການສ້າງຂຶ້ນ ສະຖານທູດຣັງກາຣີ. ການແລກປ່ຽນກັນລະຫວ່າງຊາວກະສິກອນກ່ຽວກັບສັດຕູພືດ ໂຄງການ NUDP.
ເຜີຍແຜ່ເມື່ອ ເດືອນພະຈິກ 2019

ສັງລວມຫຍໍ້

ແຜນງານຮ່ວມຂອງຄູ່ຮ່ວມພັດທະນາເອີຣົບ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 2016-2020

# ກະສິກຳ & ການພັດທະນາຊົນນະບົດ









## ຈຸດປະສົງລວມ

ຈຸດສຸມຂອງແຜນງານຮ່ວມຂອງຄູ່ຮ່ວມພັດທະນາເອີຣົບໃນຂະແໜງການນີ້ແມ່ນ:
ການພັດທະນາແບບຍືນຍົງໃນເຂດຊົນນະບົດ ໂດຍຜ່ານການພັດທະນາກະສິກຳທີ່ເປັນທຳ ແລະ ຮັກສາຜົນປະໂຫຍດຂອງຜູ້ຜະລິດຂະໜາດນ້ອຍ ແລະ ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ
ຫຼຸດຜ່ອນຄວາມກົດດັນໃນການຂະຫຍາຍການຜະລິດກະສິກຳໄປສູ່ເຂດປ່າໄມ້
ປັບປຸງສະພາບເງື່ອນໄຂທາງສັງຄົມ ເຊິ່ງລວມມີວຽກງານໂພຊະນາການ, ການເຂົ້າເຖິງຕະຫຼາດ ແລະ ການບໍລິການທາງສັງຄົມທີ່ດີກວ່າເກົ່າ ໂດຍໃຫ້ມີຖະໜົນຫົນທາງ, ນ້ຳສະອາດ ແລະ ຄວາມພ້ອມໃນການປັບຕົວເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດໃນເຂດຊົນນະບົດຫຼາຍກວ່າເກົ່າ.

EU Brochure - Agric & Rural Dev LAO.indd 1 3/26/20 11:00 AM

ລັດຖະບານແຫ່ງ ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງຫຼວງຫຼາຍໃນການແກ້ໄຂຄວາມທຸກຍາກໃນເຂດຊົນນະບົດ. ການເປີດກວ້າງຂະແໜງກະສິກຳໄປສູ່ຕະຫຼາດ, ການເພີ່ມຂຶ້ນຂອງການເຮັດສັນຍາຊື້ຂາຍຜົນຜະລິດກະສິກຳ ແລະ ການລົງທຶນຂະໜາດໃຫຍ່ໄດ້ສ້າງໂອກາດຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍ່ຕາມ, ຍັງມີບັນດາສິ່ງທ້າທາຍທີ່ໜ້າເປັນຫ່ວງປະກົດຂຶ້ນຢູ່ເຊັ່ນວ່າ: ການເພີ່ມຂຶ້ນຂອງການນຳໃຊ້ຢາປາບສັດຕູພືດ, ຄຸນນະພາບດິນ ແລະ ຊີວະນາໆພັນ ພວມຫຼຸດລົງ ແລະ ການເຂົ້າເຖິງທີ່ດິນກໍ່ຫຼຸດລົງ ເນື່ອງຈາກການສຳປະທານທີ່ດິນ. ປະກົດການ ດັ່ງກ່າວນີ້ ຄຽງຄູ່ກັບການປ່ຽນແປງສະພາບດິນຟ້າອາກາດ ກຳລັງເພີ່ມ ຄວາມສ່ຽງຕໍ່ ໄພພິບັດທາງທຳມະຊາດຂອງຊາວກະສິກອນ.

## ຈຸດປະສົງສະເພາະ

### SO 1 – ປັບປຸງຮູບແບບການຜະລິດກະສິກຳ

ຊາວກະສິກອນ ຕ້ອງການການສະໜັບສະໜູນ ເພື່ອປັບປຸງ ການຜະລິດກະສິກຳ ດັ່ງນີ້:

ຊາວກະສິກອນ ຕ້ອງການ ການສະໜັບສະໜູນ ເພື່ອປັບປຸງການຜະລິດກະສິກຳ ດັ່ງນີ້:

- ປັບປຸງ ແລະ ດັດແປງແນວພັນໃຫ້ຫຼາກຫຼາຍ
- ເພີ່ມຄວາມຫຼາກຫຼາຍໃນການປູກພືດ
- ການຄຸ້ມຄອງຄວາມອຸດົມສົມບູນຂອງດິນຢ່າງມີປະສິດທິພາບເພື່ອເຮັດໃຫ້ລະບົບການ ປູກພືດມີຄວາມຍືນຍົງ

ນອກນີ້, ແຜນງານຮ່ວມ ຍັງລິເລີ່ມ ສະໜັບສະໜູນ:

- ຝຶກອົບຮົມດ້ານການຄຸ້ມຄອງສັດຕູພືດ ແລະ ພະຍາດທີ່ສົ່ງຜົນກະທົບຕໍ່ ພືດ ແລະ ສັດ
- ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ, ການຝຶກອົບຮົມວິຊາຊີບ ແລະ ເພີ່ມທະວີຄວາມສາມາດໃນການຄົ້ນຄ້ວາວິໄຈ

### SO 2 – ສົ່ງເສີມການຜະລິດກະສິກຳຄອບຄົວໃຫ້ເຂັ້ມແຂງ

ການສະໜັບສະໜູນການຜະລິດກະສິກຳຄອບຄົວ ມີຄວາມສຳຄັນໃນການຕໍ່ສູ້ກັບການຂາດເຂີນ ສະບຽງອາຫານ ແລະ ການປັບປຸງໂພຊະນາການ. ເພື່ອສືບຕໍ່ປົດບາດຂອງການຜະລິດກະສິກຳຄອບຄົວ, ຈຳເປັນຕ້ອງສ້າງຄວາມ ເຂັ້ມແຂງໃຫ້ແກ່ຊາວກະສິກອນ ແລະ ສ້າງຄວາມສາມາດໃຫ້ແກ່ອົງການຈັດຕັ້ງຂອງຊາວກະສິກອນ ເຊິ່ງກຳລັງເພີ່ມຂຶ້ນ ເນື່ອງຈາກໄດ້ຮັບການຊ່ວຍເຫຼືອຈາກ ຄູ່ຮ່ວມພັດທະນາເອີຣົບ.

Farmer groups

| | |
|---|---|
| 2010 | 2,950 |
| 2017 | 3,630 |

### SO 3 – ປັບປຸງປະສິດທິພາບດ້ານເສດຖະກິດ

ຂະບວນການຜະລິດໄດ້ຮັບການປັບປຸງໂດຍການ:

- ປັບປຸງເຕັກນິກການເກັບຮັກສາຜົນຜະລິດພາຍຫຼັງການເກັບກ່ຽວ
- ພັດທະນາລະບົບຕ່ອງໂສ້ສະບຽງອາຫານແບບໃໝ່
- ເຮັດໃຫ້ການເຊື່ອມໂຍງກັບຕະຫຼາດດີຂຶ້ນກວ່າເກົ່າ

ຕ່ອງໂສ້ມູນຄ່າຂອງຜະລິດຕະພັນຕ່າງໆແມ່ນສາມາດຮັບການແກ້ໄຂໄດ້ໂດຍຜ່ານການນຳໃຊ້ລະບົບຂໍ້ມູນຂ່າວ ສານການຕະຫຼາດ ເຊິ່ງເຮັດໃຫ້ຊາວກະສິກອນ, ຊາວຄ້າຂາຍ, ລັດຖະກອນ ແລະ ພາກເອກະຊົນ ມີໂອກາດເຂົ້າເຖິງຕະຫຼາດ ທີ່ດີກວ່າເກົ່າ. ອົງການຈັດຕັ້ງທີ່ເຮັດວຽກກ່ຽວກັບການຄ້າຂາຍຜະລິດຕະພັນກະສິກຳຍັງໄດ້ຮັບການສະໜັບສະໜູນເພື່ອເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງ ສາມາດແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບໂອກາດ, ຄວາມສ່ຽງ ແລະ ສິ່ງທ້າທາຍຕ່າງໆ.

### SO4–ປັບປຸງການໃຫ້ບໍລິການໃນເຂດຊົນນະບົດ

ວຽກງານການຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ ເລັ່ງໃສ່ການສ້າງລາຍຮັບ ແລະ ປັບປຸງຄວາມພ້ອມ ແລະ ການເຂົ້າເຖິງການບໍລິການທາງສັງຄົມໃຫ້ມີຄວາມສະເໝີພາບ (ເຊັ່ນໂພຊະນາການ, ນ້ຳສະອາດ ແລະ ສຸຂະອານາໄມ, ສາທາລະນະສຸກ ແລະ ການສຶກສາ) ການວາງແຜນ ແລະ ການບໍລິຫານທ້ອງຖິ່ນ ທີ່ເນັ້ນໃສ່ຄວາມຕ້ອງການຂອງປະຊາຊົນມີຄວາມສຳຄັນໃນການພັດທະນາເຂດຊົນນະບົດ ແລະ ເຂດ ຫ່າງໄກສອກຫຼີກ ແລະ ປັບປຸງເງື່ອນໄຂ ດ້ານເສດຖະກິດ-ສັງຄົມ.







## ຂໍ້ມູນຫຼ້າສຸດ

ການສືບຕໍ່ເຮັດກະສິກຳໂດຍການປູກພືດຊະນິດດຽວກັນໃນພື້ນທີ່ກວ້າງທີ່ໄດ້ຮັບການຊຸກຍູ້ຈາກ ການເຊົ່າ ແລະ ການສຳປະທານທີ່ດິນຂະໜາດໃຫຍ່ ນຳໄປສູ່:

- ບັນຫາຄວາມອຸດົມສົມບູນ ແລະ ການເຊາະເຈື່ອນຂອງດິນ
- ກະສິກອນຖືກບັງຄັບໃຫ້ໃຊ້ສານເຄມີເພື່ອຮັກສາຜົນຜະລິດກະສິກຳຫຼາຍຂຶ້ນ

ບົດລາຍງານຫຼ້າສຸດສະແດງໃຫ້ເຫັນວ່າການນຳໃຊ້ຢາປາບສັດຕູພືດແມ່ນເພີ່ມຂຶ້ນຢ່າງໄວວາ. ສານເຄມີຈາກຢາປາບສັດຕູພືດໃນຜະລິດຕະພັນອາຫານ, ສິ່ງແວດລ້ອມ ແລະ ໃນເລືອດຂອງຜູ້ບໍລິໂພກແມ່ນຮອດລະດັບ ທີ່ໜ້າເປັນຫ່ວງໃນໄລຍະພຽງບໍ່ເທົ່າໃດປີ.

- ການຜະລິດກະສິກຳທີ່ດີຈຳນວນຫຼາຍກຳລັງໄດ້ຮັບການລິເລີ່ມ ແລະ ຖືກພັດທະນາ ຈັດຕັ້ງປະຕິບັດ
- ຄວາມຕ້ອງການຜະລິດຕະພັນອິນຊີກຳລັງເພີ່ມຂຶ້ນ
- ການຈັດຕັ້ງປະຕິບັດດ້ານນິເວດວິທະຍາກະສິກຳໄດ້ຮັບການ ສົ່ງເສີມ ແລະ ສປປ ລາວ ກໍ່ໄດ້ເປັນຜູ້ນຳໜ້າຂອງອາຊຽນທາງດ້ານນິເວດວິທະຍາກະສິກຳ ໂດຍການດຳເນີນແນວຄິດລິເລີ່ມແຫ່ງຊາດວ່າດ້ວຍກະສິກຳເພື່ອການອະນຸລັກ
- ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດທີ່ຖືກຮັບຮອງໃນປີ 2017
- ການຫ້າມໃຫ້ມີການສຳປະທານປູກກ້ວຍໃໝ່ ຢູ່ບ່ອນທີ່ຄວາມເສຍຫາຍທາງສິ່ງແວດລ້ອມ ແລະ ສັງຄົມຫຼາຍ







ຕາມທິດເຂັມໂມງຈາກເທິງສຸດ: ຖົ່ວແຮ ແລະ ອ່າງໂຕ່ງນ້ຳ ໂຄງການ NUDP. ການລ້ຽງໝູຢູ່ແຂວງຜົ້ງສາລີເຊິ່ງເປັນສ່ວນໜຶ່ງຂອງໂຄງການ NU-PCR EU. ຟາມລ້ຽງປານ້ຳຫຸມ ສະຖານທູດຮັງກາຣີ.

## ການປະກອບສ່ວນຂອງແຜນງານຮ່ວມເຂົ້າໃນຂະແໜງກະສິກຳ ແລະ ການພັດທະນາຊົນນະບົດນັບແຕ່ປີ 2016 ຫາ 2020

ຄູ່ຮ່ວມເອີຣົບ ປະກອບສ່ວນຢ່າງຕັ້ງໜ້າໃນການເຈລະຈາ. ການຮ່ວມມືທາງວິຊາການ ແມ່ນຕິດພັນສະເພາະກັບວຽກງານຊີວະນາໆພັນກະສິກຳ, ການປົກຄອງທີ່ດິນ, ການວາງແຜນ ແລະ ການສະໜອງທຶນເພື່ອການພັດທະນາບ້ານ, ຊາວໜຸ່ມກັບການກະສິກຳ, ກະສິກຳສີຂຽວ ແລະ ກະສິກຳເພື່ອໂພຊະນາການ.

**ຝຣັ່ງ** ເປັນປະທານຮ່ວມຂອງກຸ່ມເຮັດວຽກຂະແໜງກະສິກຳ ແລະ ການພັດທະນາຊົນນະບົດ.

**ລຸກຊຳບວກ** ສະໜັບສະໜູນການພັດທະນາຊົນນະບົດໃນບ້ານທີ່ມີຄວາມສ່ຽງຢູ່ແຂວງບໍລິຄຳໄຊ, ຄຳມ່ວນ, ບໍ່ແກ້ວ ແລະ ວຽງຈັນ.

**ຮັງກາຣີ** ແມ່ນມີຄວາມຫ້າວຫັນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຄວາມປອດໄພດ້ານຕ່ອງໂສ້ອາຫານ,ການພັດທະນາຄວາມສາມາດໃນການປິ່ນປົວສັດ ແລະ ສ້າງສວນ ແລະ ສະຖານທີ່ຜະລິດກະສິກຳຕົວແບບ.

EU Brochure - Agric & Rural Dev LAO.indd 2 3/26/20 11:00 AM